# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 16 ພຶສພາ 2010 (5-16-2010)**

## ຮັກແລະທະນຸຖນອມ

**ຂໍ້ພຣະຄັມພີໃນບົດຮຽນ:** ເອເຟໂຊ 5:21-33; 1 ເປໂຕ 3:7

## ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ສາມາດຊ່ວຍຜົວແລະເມັຽໃຫ້ຄວາມສັມພັນໃນຊີວິດແຕ່ງງານຂອງພວກເຂົາເຂັ້ມແຂງຂຶ້ນໂດຍການເຮັດໃຫ້ໜ້າທີ່ຮັບຜິດຊອບຕ່າງໆທີ່ພຣະເຈົ້າໄດ້ຊົງໂຜດປະທານໃຫ້ນັ້ນສຳເຣັດຕໍ່ກັນແລະກັນ.

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ບົດຮຽນນີ້ສເນີໃຫ້ເຫັນອຸດົມຄະຕິຂອງຄຣິສຕຽນຕໍ່ຄວາມສັມພັນລະຫວ່າງຜົວ-ເມັຽ.

## ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ໃນທຳນຽມຂອງພວກເຮົາ, ເຣື່ອງຂອງສ່ວນຕົວແລະຄວາມເພິ່ງພໍໃຈຂອງແຕ່ລະຄົນນັ້ນແມ່ນມີຄຸນຄ່າ, ການເຫັນແກ່ຕົວແລະການບໍ່ໃຫ້ກຽດຊຶ່ງກັນແລະກັນໃນຄວາມສັມພັນຊີວິດແຕ່ງງານມັນເປັນຂອງທຳມະດາ. ໃນທາງກົງກັນຂ້າມ, ການອອກແບບຂອງພຣະເຈົ້າສຳລັບຄວາມສັມພັນຂອງຜົວ-ເມັຽແມ່ນໃຫ້ເຮັດຕາມການຍອມຟັງຊຶ່ງກັນແລະກັນ, ຮັກຊຶ່ງກັນແລະກັນ, ການນັບຖືຊຶ່ງກັນແລະກັນ, ແລະການໃຫ້ກຽດຊຶ່ງກັນແລະກັນ.

ການສລອງແຕ່ງງານໃໝ່ຂອງທ່ານຈົບລົງເມື່ອໃດ? ມັນງ່າຍເຫຼືອເກີນທີ່ຈະຕົກຢູ່ໃນຄວາມຮັກກັບຄວາມຄິດຂອງຄວາມຮັກນັ້ນເອງ, ແຕ່ວ່າໃນຈຸດໃດຈຸດນຶ່ງຂອງທຸກໆຊີວິດແຕ່ງງານການສລອງແຕ່ງງານໃໝ່ມັນກໍສິ້ນສຸດລົງ, ແລະພວກເຮົາກໍສຳນຶກໄດ້ເມື່ອພວກເຮົາໄດ້ເວົ້າວ່າ, "ຂ້ອຍຮັບເອົາເຈົ້າ...ເພື່ອຮັກແລະທະນຸຖນອມ" ພວກເຮົາໄດ້ຕັດສິນໃຈຮັບເອົາອີກຄົນນຶ່ງທີ່ບໍ່ສົມບູນແບບ. ພຣະທັມຂອງພຣະເຈົ້າບອກພວກເຮົາວ່າການທີ່ຈະເຮັດໃຫ້ການແຕ່ງງານຂອງພວກເຮົາເຂັ້ມແຂງຂຶ້ນກໍໂດຍການຮັກແລະໃຫ້ກຽດຊຶ່ງກັນແລະກັນ.

ພຣະທັມເອເຟໂຊໃນບົດທີ 5:18-21 ກັບຄຳບັນຊາທີ່ຈະໃຫ້ຄົບເຕັມດ້ວຍພຣະວິນຍານຂອງພຣະເຈົ້າມີຜົນປາກົດອອກໃນການກ່າວທີ່ມີຄວາມດຶງດູດໃຈ, ເປັນເໝືອນດົນຕຣີໃນຫົວໃຈຂອງພວກເຮົາ, ຄຳຂອບພຣະຄຸນອອກຈາກປາກຂອງພວກເຮົາຢູ່ຕລອດເວລາ, ແລະ"ຍອມຟັງຊຶ່ງກັນແລະກັນຈາກການນັບຖືພຣະຄຣິດ." ປໂຍກນີ້ເປັນພື້ນຖານໃຫ້ຂໍ້ຄວາມຕໍ່ໄປນີ້; ມັນໄດ້ປະພັນທະຢ່າງຈະແຈ້ງສຳລັບຄຣິສຕຽນໃຫ້ເຫັນອົກເຫັນໃຈແລະເມດຕາຕໍ່ກັນແລະກັນ, ໃນຄຣິສຕະຈັກ, ໃນຄອບຄົວ, ແລະໃນບ່ອນເຮັດວຽກການ. ພວກທີ່ດຳເນີນໃນພຣະວິນຍານຢ່າງສົມບູນກໍຮັບໃຊ້ຜູ້ອື່ນໆຢ່າງຮ້ອນຮົນໃຈແລະບໍ່ຍາດຊີງຄວບຄຸມຄົນອື່ນໆ.

## ສຶກສາພຣະຄັມພີ

## 1. ການເຂົ້າໃຈໃນການຍອມຟັງ (ເອເຟໂຊ 5:21-24)

ຂໍ້ທີ 22 ແມ່ນຂໍ້ເກາະທ້ອຍໃກ້ຊິດກັບຂໍ້ທີ 21. ຄຳວ່າ "ຢູ່ໃຕ້" ບໍ່ພົບໃນສະບັບຕົ້ນເດີມໃນພາສາກຣີກແຕ່ວ່າມັນສືບຕໍ່ໄດ້ຄວາມໝາຍຈາກຂໍ້ທີ 21. **ພວກຜູ້ເປັນເມັຽ** ແມ່ນຫຼັກຖານຂອງການເຕັມດ້ວຍພຣະວິນຍານໂດຍການຍອມຟັງພວກທີ່ເປັນ**ຜົວຂອງພວກເຂົາເອງ** (ບໍ່ແມ່ນຜູ້ຊາຍທຸກຄົນ). "**ເໝືອນດັ່ງອົງພຣະຜູ້ເປັນເຈົ້າ**" ໝາຍເຖິງວ່າການຢູ່ໃຕ້ບັງຄັບຂອງລາວແມ່ນການເຊື່ອຟັງຄວາມຕໍ່ການເປັນພຣະເຈົ້າຂອງພຣະຄຣິດ.

ໂກໂລຊາຍ 3:18 ໃຫ້ຄວາມກະຈ່າງແຈ້ງເພີ້ມຕໍ່ສິ່ງທີ່ພວກເຮົາອ່ານ: "ຝ່າຍເມັຽ, ຈົ່ງຍອມຟັງຜົວຂອງຕົນ, ຊຶ່ງເປັນການສົມຄວນໃນອົງພຣະຜູ້ເປັນເຈົ້າ." ໂດຍການໃຊ້ຄຳວ່າ "ຍອມຟັງ" ໂປໂລ ໄດ້ເຮັດໃຫ້ເຫັນຈຸດແຍກໜ້າທີ່ຮັບຜິດຊອບຂອງເມັຽຈາກພວກລູກໆແລະຂ້າທາດທຸກຄົນ, ຜູ້ຖືກສັ່ງໃຫ້"ເຊື່ອຟັງ" (ເອເຟໂຊ 6:1,5 ແລະ ໂກໂລຊາຍ 3:18-4:1). ອັນນີ້ແມ່ນເລັງເຖິງການອາສາສມັກຕາມທຳມະຊາດໃນການຍອມຢູ່ໃຕ້ບັງຄັບຂອງເມັຽ, ໝາຍເຖິງວ່າໃນສາຍພຣະເນດຂອງພຣະເຈົ້າອຸປນິສັຍນັ້ນກໍສຳຄັນເໝືອນກັບການກະທຳ.

ໂປໂລບໍ່ໄດ້ເວົ້າເຖິງຄຸນຄ່າຂອງບຸກຄົນໃນທີ່ນີ້ຫຼືບ່ອນອື່ນໆເມື່ອລາວຂຽນວ່າໃນພຣະຄຣິດບໍ່ເປັນ"ຊາຍຫຼືຍິງ" (ຄາລາເຕັຽ 3:28) ແລະທັງພວກຜູ້ຊາຍແລະພວກຜູ້ຍິງກໍມີກຽດແລະມີຄວາມສຳຄັນທໍ່ກັນ. ລາວໄດ້ເລັງເຖິງໜ້າທີ່ໆເຄີຍປະຕິບັດຕາມຢ້າວເຮືອນ. ພຣະເຈົ້າໄດ້ມອບໜ້າທີ່ຮັບຜິດຊອບໃຫ້ພວກທີ່ເປັນຜົວໃຫ້ຮັບໃຊ້ເໝືອນເປັນຫົວຂອງຢ້າວເຮືອນ, ຄືຕຳແໜ່ງເປັນຜູ້ນຳ. ພຣະເຈົ້າປາຖນາໃຫ້ພວກທີ່ເປັນຜົວນຳພາໃນຊີວິດແຕ່ງງານແລະໃນເຮືອນຂອງພວກເຂົາ.

ການທີ່ເມັຽຢູ່ໃຕ້ບັງຄັບແມ່ນແບບແຜນຕາມຄຣິສຕະຈັກຢູ່ໃຕ້ບັງຄັບຂອງພຣະຄຣິດແລະພຣະຄຣິດໄດ້ເປັນແບບຢ່າງຂອງຜູ້ນຳທີ່ໂປໂລມີໃນຄວາມຄິດ-"ຜູ້ນຳຮັບໃຊ້" ທີ່ໄດ້ມາປະຕິບັດຜູ້ອື່ນ, ບໍ່ແມ່ນໃຫ້ຜູ້ອື່ນປະຕິບັດຕົນ (ມາຣະໂກ10:45). ໃນພາບປະກອບອັນນີ້ແມ່ນມີຂອບເຂດຈຳກັດແລະໂປໂລກໍໄດ້ຊີ້ໃຫ້ເຫັນວ່າພຣະຄຣິດເປັນພຣະຜູ້ໂຜດໃຫ້ພົ້ນຂອງຄຣິສຕະຈັກແລະເມັຽ, ມີໜ້າທີ່ໆຜົວບໍ່ສາມາດກະທຳໄດ້.

ການຍອມຢູ່ໃຕ້ບັງຄັບທີ່ຖືກຕ້ອງຕາມຜູ້ນຳເຮັດໃຫ້ເກີດເສຣີພາບໃນຊີວິດຂອງບາງຄົນ. ຕົວຢ່າງ,ໂດຍການຍອມຟັງກົດຣະບຽບຈະຣາຈອນຂ້າພະເຈົ້າກໍມີເສຣີພາບຈາກການຄິດເປັນຫ່ວງກ່ຽວກັບເຣື່ອງຈະມີຣົດຫຼາຍສໍ່າໃດ ທີ່ແລ່ນຕາມຖນົນທຸກໆເສັ້ນຢ່າງປອດພັຍ. ການຍອມຟັງຂອງຜູ້ເປັນເມັຽແມ່ນຄວາມນັບຖືຕໍ່ທຸກໆສິ່ງ, ຂອບເຂດຈຳກັດກໍແມ່ນແຕ່ຕໍ່ແຜນການຂອງພຣະເຈົ້າພຽງເທົ່ານັ້ນ. ເມັຽບໍ່ມີຂໍ້ຜູກມັດອັນໃດໃຫ້ລ່ວງລະເມີດຕໍ່ກົດຂອງການເປັນຄຣິສຕຽນຂອງຕົນ. ຝ່າຍຜົວກໍບໍ່ຄວນສົມມຸດຢ່າງອັດຕະໂນມັດວ່າຕົນເອງເປັນຜູ້ສລາດກວ່າຫຼືຫຼັກແຫຼມກວ່າເມັຽຂອງຕົນ. ສ່ວນຫຼາຍແລ້ວຜົວອາດຈະຕ້ອງການຄຳແນະນຳຈາກເມັຽຂອງຕົນ. ບັນຫາມີຢູ່ວ່າເມັຽຈະເລືອກທີ່ຈະສນັບສນູນຜົວຂອງຕົນຫຼືບໍ່ເພື່ອໃຫ້ຕຳແໜ່ງທີ່ພຣະເຈົ້າໄດ້ມອບໃຫ້ຜົວນັ້ນຄົບຖ້ວນ.

## 2. ການເຂົ້າໃຈເຣື່ອງຄວາມຮັກ (ເອເຟໂຊ 5:25-30)

ໃນຊີວິດແຕ່ງງານຈະບໍ່ມີການທຳຮ້າຍໃດໆ; ຄຳບັນຍັດໃນຂໍ້ 21 (ການຍອມຟັງທັງສອງຝ່າຍ) ສ່ອງໃຫ້ເຫັນໃນຂໍ້ນີ້ເຊັ່ນກັນ. ຜົວທຸກຄົນຕ້ອງ**ຮັກເມັຽ**ຂອງຕົນ, ແລະມາດຕະຖານກໍຄືບໍ່ມີຂໍ້ແມ້, ການໄຖ່, ແລະການຍອມຖວາຍຄວາມຮັກຂອງພຣະຄຣິດຜູ້ທີ່**ມອບພຣະອົງເອງສຳລັບ**ຄຣິສຕະຈັກ. ຄວາມຮັກແທ້ບໍ່ແມ່ນຄວາມຮູ້ສຶກທີ່ວ່າ" ເຮັດໃຫ້ພວກເຮົາຫຼົງໄຫຼ"-ຄວາມຮູ້ສຶກເຫຼົ່ານີ້ໄປໆມາໆ. ແທນທີ່ມັນແມ່ນຄວາມສາມາດທີ່ຄອງຄອຍຖ້າ, ເຮັດວຽກເພື່ອ, ສະລະຕົວເອງ ເພື່ອຄວາມສົມໃຈອັນສຸດຍອດຂອງຜູ້ອື່ນອີກ. ພຣະຜູ້ເປັນເຈົ້າໄດ້ຊົງໂຜດຊ່ວຍພວກເຮົາໃຫ້

ພົ້ນເພື່ອເຮັດໃຫ້ພວກເຮົາ**ບໍຣິສຸດ**, **ການຊໍາຮະ**ພວກເຮົາໃຫ້ສະອາດໂດຍຜ່ານ**ພຣະຄໍາ**ຂອງພຣະອົງ. ນັ້ນແມ່ນຄໍາສັນຍາທີ່ຕັ້ງພຣະທັຍອັນດີໄວ້ແລ້ວຂອງພຣະອົງຕໍ່ພວກເຮົາ, ເພື່ອໃຫ້ພວກເຮົາ**ໄດ້ຢູ່**ກັບ**ພຣະອົງເອງໃນຄວາມຮຸ່ງເຮືອງເຫຼືອງເຫຼື້ອມ**, ປາສຈາກທຸກສິ່ງທີ່ຈະແຍກຈາກຄວາມຮັກຂອງການໄຖ່ໃຫ້ພົ້ນ. ຜົວທີ່ຮັກເມັຽຂອງຕົນກໍມັກຄໍາບັນຊາຂອງທັງສອງຝ່າຍນີ້. (ຂໍ້ 21).

ເມື່ອບໍ່ນານມານີ້ຂ້າພະເຈົ້າໄດ້ໃຫ້ຄໍາປຶກສາກັບຄູ່ແຕ່ງງານທີ່ມີເບື້ອງຫຼັງອັນຍາວນານໃນການບໍ່ກົມກຽວກັນແລະທໍາຮ້າຍກັນ. ໃນທຸກໆບົດຮຽນໃດພວກເຂົາຈະເວົ້າບໍ່ກາຍສອງນາທີກໍກ່າວໂທດແລະຈົກດຶງຊຶ່ງກັນແລະກັນໂລດ. ພວກເຈົ້າໜ້າທີ່ທາງກົດໝາຍກໍນາບຂູ່ຈະເອົາພວກລູກຂອງພວກເຂົາແຍກໄປຖ້າພວກເຂົາຫາກຕົບຕີກັນອີກເທື່ອນຶ່ງ. ພວກເຂົາຕົກຢູ່ໃນໂອກາດສຸດທ້າຍຂອງການປົວແປງຊີວິດແຕ່ງງານຂອງພວກເຂົາ. ແຕ່ລະຄົນກໍຕູ່ຫາໃສ່ອີກຜູ້ນຶ່ງທີ່ບັນຫາທຸກໆຢ່າງທີ່ໄດ້ເກີດຂຶ້ນໃນຄວາມສັມພັນ ແລະຕໍ່ຈາກນັ້ນພວກເຂົາກໍໄດ້ຖາມຂ້າພະເຈົ້າໃຫ້ຊ່ວຍພວກເຂົາປົວແປງມັນ, ແຕ່ວ່າບໍ່ມີຜູ້ໃດທີ່ຈະຮັບເອົາການປ່ຽນແປງຕໍ່ການປະພຶດຂອງຕົນເອງ.

ໃນພາກພຣະສັນຍາໃໝ່, ພວກຄຣິສຕຽນປົກກະຕິແລ້ວກໍຖືກກ່າວໄວ້ໃນກົດຣະບຽບອັນສູງສຸດ, ຕົວຢ່າງ, ໃນ 1 ໂກຣິນໂທ 1:2, ພວກເຂົາຖືກຮ້ອງວ່າ,"ວິຫານຂອງພຣະເຈົ້າທີ່ໂກຣິນໂທ, ສໍາລັບພວກທີ່ຊໍາຣະຕົນໃຫ້ບໍຣິສຸດໃນພຣະເຢຊູຄຣິດແລະໄດ້ຖືກເອີ້ນວ່າພວກນັກບຸນ." ນີ້ຄືການທີ່ພຣະເຈົ້າສ້າງພວກເຮົາໃນຄວາມຮັກຂອງພຣະອົງ. ສໍາລັບຜົວທີ່ກະທໍາຢ່າງນີ້ຕໍ່ເມັຽຂອງຕົນກໍແມ່ນການເຫັນສ່ວນສວ່າງຂອງເມັຽທີ່ເຊື່ອງຊ້ອນຢູ່ພາຍໃນ. ແຕ່ວ່າມັນຄືກັນກັບການຍອມຢູ່ໃຕ້ບັງຄັບນັ້ນແຫຼະ, ຄືມັນຕ້ອງມີຢູ່ໃນຫົວໃຈຂອງຜົວກ່ອນໆທີ່ມັນຈະອອກມາຈາກປາກຂອງລາວ.

## 3. <u>ການເຂົ້າໃຈການນັບຖືແລະໃຫ້ກຽດ</u> (ເອເຟໂຊ 5:31-33; 1 ເປໂຕ 3:7)

ສັງຄົມຄຣິສຕຽນແມ່ນຍົກຖານະຂອງຜູ້ຍິງຢ່າງສູງສົ່ງ. ໃນຂນະທີ່ຜົວແລະເມັຽເປັນ**ກາຍອັນດຽວກັນ**ນັ້ນ, ຜົວທີ່**ຮັກເມັຽຂອງຕົນ**ກໍຄືກັບທີ່ລາວ**ຮັກຕົວລາວເອງ**. ເປົ້າໝາຍຂອງອາຈານໂປໂລກໍແມ່ນວ່າໂດຍຜ່ານຄວາມຮັກຂອງຜົວຫຼືອາດຈະບໍ່ມີພຽງພໍລາວຈະຊ່ວຍດັດແປງຜູ້ເປັນເມັຽທີ່ລາວຈະຕ້ອງຢູ່ນໍາ.

ເປົ້າໝາຍຊີວິດແຕ່ງງານຂອງຄຣິສຕຽນທຸກຄົນແມ່ນເພື່ອນໍາສະງ່າຣາສີມາສູ່ພຣະເຈົ້າ. ວິທີທາງທີ່ພວກເຮົາໃຊ້ເພື່ອເຮັດໃຫ້ເປົ້າໝາຍຕ່າງໆຂອງພຣະເຈົ້າບັນລຸຜົນສໍາເຣັດ ກໍໂດຍການໃຊ້ນິສັຍທີ່ຖືກໄຖ່ໃຫ້ພົ້ນອັນດຽວກັນນັ້ນ. ຖ້າວ່າຈຸດມຸ້ງໝາຍຂອງພວກເຮົາແມ່ນເພື່ອນໍາສະງ່າຣາສີມາສູ່ພຣະເຈົ້າ, ພວກເຮົາກໍຄວນກະທໍາຕໍ່ຊຶ່ງກັນແລະກັນໂດຍສະແດງ**ຄວາມນັບຖື**ແລະ**ໃຫ້ກຽດ**ແກ່ກັນແລະກັນ. ອາຈານໂປໂລຜູກມັດຄວາມຄິດຂອງພວກເຮົາອີກກ່ຽວກັບການແຕ່ງງານໃນພຣະທັມປະຖົມມະການ 2:24. ການກາຍມາເປັນຮ່າງ**ກາຍອັນດຽວກັນ**ໝາຍຄວາມວ່າທັງສອງຄົນຊັກຈູງໃຫ້ເຂົ້າຮ່ວມສາຍສໍາພັນການແຕ່ງງານແລະມີໜ້າທີ່ຮັບຜິດຊອບເຮັດໃຫ້ມັນສົມບູນແລະເຂັ້ມແຂງຂຶ້ນເທົ່າທີ່ຈະເຮັດໄດ້.

ທ່ານເປໂຕໄດ້ບັນທຶກເອົາໄວ້ວ່າຜົວຄວນຈະກະທໍາຕໍ່ເມັຽຂອງຕົນດ້ວຍ**ຄວາມເຂົ້າໃຈ**ຫຼືການຄິດເຖິງຜູ້ອື່ນກ່ອນ, ເວົ້າແບບຕົງໆ "ອີງຕາມຄວາມຮູ້," ການເນັ້ນໃສ່ຄວາມວ່ອງໄວຕໍ່ຄວາມຮູ້ສຶກຕໍ່ສະຖານະການຂອງເມັຽ. ສິ່ງນີ້ໄດ້ຖືກຂຽນໄວ້ກ່ອນມີເຄື່ອງມືໃຊ້ສອຍຕ່າງໆແບບອັດຕະໂນມັດ, ເມື່ອການເຮັດວຽກຂອງຜູ້ຍິງໃນບ້ານເຮືອນອາດຈະໃຊ້ເຫື່ອແຮງຫຼາຍເກີນໄປ. ຕາມປົກກະຕິແລ້ວເມັຽເປັນເພດທີ່ອ່ອນແອກ່ວາທາງດ້ານກໍາລັງຮ່າງກາຍ, ແຕ່ວ່າເທົ່າທຽມກັນທາງດ້ານກຽດສັກສີ. ຜົວແລະເມັຽເຮັດວຽກເປັນທີມດຽວກັນ, ທັງສອງມີສິດເທົ່າທຽມກັນໃນການຕັດສິນໃຈທີ່ຈະໃຫ້ເຖິງເປົ້າໝາຍອັນດຽວກັນ. ພວກເຂົາເປັນ**ຜູ້ຮ່ວມຮັບມໍຣະດົກຂອງຊີວິດຊຶ່ງມີມາໂດຍທາງພຣະຄຸນນໍາກັນ**, ນີ້ແມ່ນເລັງໃສ່ຄວາມລອດພົ້ນບາບຫຼືຊີວິດຝ່າຍເນື້ອໜັງຫຼືໝົດທັງສອງຢ່າງ, ສຸດແລ້ວແຕ່ສະຖານະການ.

ສັງຄົມສມັຍໃໝ່ສຸມຄວາມຕັ້ງໃຈໃສ່ສິດສ່ວນຕົວເປັນໃຫຍ່, ແຕ່ວ່າພຣະເຈົ້າສອນວ່າເສຣີພາບນັ້ນມີມາໂດຍຜ່ານການເຕັມລົ້ນດ້ວຍພຣະວິນຍານແລະຄວາມສັມພັນຊຶ່ງກັນແລະກັນໃນຄວາມຮັກແລະການຍິນຍອມຢູ່ໃຕ້ບັງຄັບອັນຖືກຕ້ອງ.    ການແຕ່ງງານຂອງທຸກໆຄູ່ຈະເຂັ້ມແຂງຂຶ້ນເມື່ອພວກເມັຽຍອມຢູ່ໃຕ້ບັງຄັບການເປັນຜູ້ນຳຮັບໃຊ້ຂອງພວກຜົວຂອງພວກເຂົາ, ເມື່ອພວກຜົວຮັກເມັຽຂອງພວກເຂົາເໝືອນດັ່ງພຣະຄຣິດໄດ້ຮັກຄຣິສຕະຈັກ, ແລະເມື່ອພວກເຂົາຫາກນັບຖືແລະໃຫ້ກຽດແກ່ຊຶ່ງກັນແລະກັນ.

ພວກເຮົາຈະເຮັດໃຫ້ແຜນການຂອງພຣະເຈົ້າສຳເຣັດໃນຊີວິດແຕ່ງງານຂອງພວກເຮົາໄດ້ຢ່າງໃດ? ພວກເຮົາສາມາດເຮັດດັ່ງນີ້ໂດຍ:

- ພວກເມັຽທຸກຄົນຕ້ອງຍອມຟັງແລະສນັບສນູນການເປັນຜູ້ນຳຂອງຜົວໃນເຮືອນຂອງພວກເຂົາຢ່າງເຕັມໃຈ. ຈົ່ງຫຼີກເວັ້ນຄວາມຄິດທີ່ເປັນຝ່າຍລົບແລະຄວາມຄິດອັນຂົມຂື່ນກ່ຽວກັບຜົວຂອງທ່ານ, ຈົ່ງຂອບຄຸນພຣະເຈົ້າສຳລັບລາວ, ແລະໃຊ້ຄຳເວົ້າທີ່ຈະເສີມສ້າງລາວຂຶ້ນ, ແທນທີ່ຈະຈົ່ມກ້າງລາວລົງ.
- ພວກຜົວທຸກຄົນຈົ່ງຮັກເມັຽຂອງຕົນເໝືອນດັ່ງພຣະຄຣິດໄດ້ຮັກຄຣິສຕະຈັກ. ຈົດຈໍ່ຄວາມຄິດຂອງທ່ານໃສ່ໃນຈຸດດີໃນຄວາມເປັນຄົນທີ່ເມັຽຂອງທ່ານມີນັ້ນ, ບໍ່ແມ່ນຈຸດອ່ອນຂອງລາວ. ຈົ່ງຂອບຄຸນພຣະເຈົ້າສຳລັບລາວ, ແລະຈົ່ງໃຊ້ຄຳເວົ້າຂອງທ່ານແລະການກະທຳທຸກຢ່າງເພື່ອໜູນໃຈລາວ, ບໍ່ແມ່ນເຮັດໃຫ້ລາວທໍ້ຖອຍໃຈ.
- ການຕັດສິນໃຈທີ່ຈະເຮັດໃຫ້ການແຕ່ງງານຂອງທ່ານເປັນໄປຕາມເປົ້າໝາຍໃນການນຳເອົາສະງ່າຣາສີມາສູ່ພຣະເຈົ້າ, ບໍ່ພຽງແຕ່ຄຳພຍານຂອງມັນຕໍ່ຊາວໂລກ, ແຕ່ວ່າໂດຍການເສີມສ້າງຊຶ່ງກັນແລະກັນຂຶ້ນໂດຍຜ່ານການສະແດງອອກໃນຄວາມຮັກແລະຄວາມນັບຖື.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA